ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 1166 /ທຄຕລ 2026
ນະຄອນຫຼວງວຽງຈັນ, ວັນທີ: 02 APR 2026

# ໜັງສືແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາອອກແບບຕຶກອາຄານຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດອອກແບບກໍ່ສ້າງ ແລະ ຕົບແຕ່ງ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາອອກແບບຕຶກອາຄານຂອງ ທຄຕລ ໂດຍມີເນື້ອໃນດັ່ງນີ້:

I. **ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:**

**1. ຊອງທີ 01 (ບໍ່ປິດຊອງ):**

1) ໃບທະບຽນວິສາຫະກິດ;
2) ໃບອະນຸຍາດດຳເນີນທຸລະກິດປີ 2025 ຫຼື 2026;
3) ທຶນຈົດທະບຽນວິສາຫະກິດ 1 ຕື້ກີບຂຶ້ນໄປ;
4) ໃບຢັ້ງຢືນການເສຍອາກອນປີ 2024 ຫຼື 2025;
5) ໃບຢັ້ງຢືນຜົນງານ ແລະ ປະສົບການທາງດ້ານການອອກແບບກໍ່ສ້າງ ແລະ ຕົບແຕ່ງອາຄານທະນາຄານ ຫຼື ອາຄານສຳນັກງານຫ້ອງການ 3 ຊັ້ນ ຢ່າງໜ້ອຍ 3 ໂຄງການ.

- ເອກະສານຊອງທີ 01 ແມ່ນໃຫ້ສົ່ງກ່ອນວັນທີ 24/04/2026 ເວລາ 08:30-15:30 ໂມງ ທີ່ພະແນກຫ້ອງການບໍລິຫານ ແລະ ການເງິນ ຊັ້ນ 04 ຕຶກ C ສຳນັກງານໃຫຍ່.

**2. ຊອງທີ 02 (ປິດຊອງ):**

1) ໃບສະເໜີລາຄາ 1 ຊຸດ ເປັນສະກຸນເງິນກີບ ລວມອາກອນມູນຄ່າເພີ່ມ ໂດຍສະເໜີລາຄາຫົວໜ່ວຍຕໍ່ຕາແມັດ (ລາຄາ/ຕາແມັດ) ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ຮູບແບບ | (ລາຄາຫົວໜ່ວຍ/ຕາແມັດ) | | | |
|---|---|---|---|---|---|
| | | ລາຄາເຂດ 01: ນະຄອນຫຼວງວຽງຈັນ | | | |
| | | ອາຄານສຳນັກງານ/ມ$^2$ | ຫໍພັກ/ມ$^2$ | ທາງເຂົ້າ, ກຳແພງ, ຝາກັ້ນດິນ ແລະ ຮົ້ວ/ມ$^2$ | ເດີ່ນ ແລະ ຖົມດິນ/ມ$^2$ |
| 1 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 2 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ (ກໍລະນີນຳໃຊ້ແບບເກົ່າຂອງ ຂໍ້ 1ໂດຍອອກແບບຈັດສັນ ຄືນໃສ່ດິນຕອນໃໝ່ ເຊິ່ງຈະມີການດັດແກ້ແບບໂດຍຕັດ ຫຼື ອອກແບບເພີ່ມ ເຊັ່ນ: ເຮືອນພັກ, ວຽກເດີ່ນ, ຄວາມສູງ-ຕ່ຳຂອງອາຄານທຽບໃສ່ຕອນດິນ ແລະ ໜ້າທາງ, ວຽກກຳແພງ-ວຽກປະຕູຮົ້ວ-ວຽກລະບົບໄຟຟ້າຮົ້ວ, ຮ່ອງລະບາຍນ້ຳ, ຮາກຖານ ແລະ ວຽກອື່ນທີ່ໄດ້ອອກແບບໃໝ່ ເພື່ອໃຫ້ມີຄວາມເໝາະສົມ) | | | | |
| 3 | ລາຄາອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 4 | ລາຄາສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| ລ/ດ | ຮູບແບບ | (ລາຄາຫົວໜ່ວຍ/ຕາແມັດ) | | | |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | ລາຄາເຂດ 02: ແຂວງບໍລິຄຳໄຊ, ແຂວງວຽງຈັນ | | | |
|---|---|---|---|---|---|
| | | ອາຄານສຳນັກງານ/ມ$^2$ | ຫໍພັກ/ມ$^2$ | ທາງເຂົ້າ, ກຳແພງ, ຝາກັ້ນດິນ ແລະ ຮົ້ວ/ມ$^2$ | ເດີ່ນ ແລະ ຖົມດິນ/ມ$^2$ |
| 1 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 2 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ (ກໍລະນີນຳໃຊ້ແບບເກົ່າຂອງ ຂໍ້ 1ໂດຍອອກແບບຈັດສັນ ຄືນໃສ່ດິນຕອນໃໝ່ ເຊິ່ງຈະມີການດັດແກ້ແບບໂດຍຕັດ ຫຼື ອອກແບບເພີ່ມ ເຊັ່ນ: ເຮືອນພັກ, ວຽກເດີ່ນ, ຄວາມສູງ-ຕ່ຳຂອງອາຄານທຽບໃສ່ຕອນດິນ ແລະ ໜ້າທາງ, ວຽກກຳແພງ-ວຽກປະຕູຮົ້ວ-ວຽກລະບົບໄຟຟ້າຮົ້ວ, ຮ່ອງລະບາຍນ້ຳ, ຮາກຖານ ແລະ ວຽກອື່ນທີ່ໄດ້ອອກແບບໃໝ່ ເພື່ອໃຫ້ມີຄວາມເໝາະສົມ) | | | | |
| 3 | ລາຄາອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 4 | ລາຄາສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ ແລະ ລາຄາກາງ | | | | |

| ລ/ດ | ຮູບແບບ | (ລາຄາຫົວໜ່ວຍ/ຕາແມັດ) | | | |
|---|---|---|---|---|---|
| | | ລາຄາເຂດ 03: ແຂວງອຸດົມໄຊ, ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ, ແຂວງຜົ້ງສາລີ, ແຂວງຫົວພັນ | | | |
| | | ອາຄານສຳນັກງານ/ມ$^2$ | ຫໍພັກ/ມ$^2$ | ທາງເຂົ້າ, ກຳແພງ, ຝາກັ້ນດິນ ແລະ ຮົ້ວ/ມ$^2$ | ເດີ່ນ ແລະ ຖົມດິນ/ມ$^2$ |
| 1 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 2 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ (ກໍລະນີນຳໃຊ້ແບບເກົ່າຂອງ ຂໍ້ 1ໂດຍອອກແບບຈັດສັນ ຄືນໃສ່ດິນຕອນໃໝ່ ເຊິ່ງຈະມີການດັດແກ້ແບບໂດຍຕັດ ຫຼື ອອກແບບເພີ່ມ ເຊັ່ນ: ເຮືອນພັກ, ວຽກເດີ່ນ, ຄວາມສູງ-ຕ່ຳຂອງອາຄານທຽບໃສ່ຕອນດິນ ແລະ ໜ້າທາງ, ວຽກກຳແພງ-ວຽກປະຕູຮົ້ວ-ວຽກລະບົບໄຟຟ້າຮົ້ວ, ຮ່ອງລະບາຍນ້ຳ, ຮາກຖານ ແລະ ວຽກອື່ນທີ່ໄດ້ອອກແບບໃໝ່ ເພື່ອໃຫ້ມີຄວາມເໝາະສົມ) | | | | |
| 3 | ລາຄາອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 4 | ລາຄາສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ ແລະ ລາຄາກາງ | | | | |

| ລ/ດ | ຮູບແບບ | (ລາຄາຫົວໜ່ວຍ/ຕາແມັດ) | | | |
|---|---|---|---|---|---|
| | | ລາຄາເຂດ 04: ແຂວງຊຽງຂວາງ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ | | | |
| | | ອາຄານສຳນັກງານ/ມ$^2$ | ຫໍພັກ/ມ$^2$ | ທາງເຂົ້າ, ກຳແພງ, ຝາກັ້ນດິນ ແລະ ຮົ້ວ/ມ$^2$ | ເດີ່ນ ແລະ ຖົມດິນ/ມ$^2$ |
| 1 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 2 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ (ກໍລະນີນຳໃຊ້ແບບເກົ່າຂອງ ຂໍ້ 1ໂດຍອອກແບບຈັດສັນ ຄືນໃສ່ດິນຕອນໃໝ່ ເຊິ່ງຈະມີການດັດແກ້ແບບໂດຍຕັດ ຫຼື ອອກແບບເພີ່ມ ເຊັ່ນ: ເຮືອນພັກ, ວຽກເດີ່ນ, ຄວາມສູງ-ຕ່ຳຂອງອາຄານທຽບໃສ່ຕອນດິນ ແລະ ໜ້າທາງ, ວຽກກຳແພງ-ວຽກປະຕູຮົ້ວ-ວຽກລະບົບໄຟຟ້າຮົ້ວ, ຮ່ອງລະບາຍນ້ຳ, ຮາກຖານ ແລະ ວຽກອື່ນທີ່ໄດ້ອອກແບບໃໝ່ ເພື່ອໃຫ້ມີຄວາມເໝາະສົມ) | | | | |
| 3 | ລາຄາອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 4 | ລາຄາສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ ແລະ ລາຄາກາງ | | | | |

| ລ/ດ | ຮູບແບບ | (ລາຄາຫົວໜ່ວຍ/ຕາແມັດ) | | | |
|---|---|---|---|---|---|
| | | ລາຄາເຂດ 05: ແຂວງຄຳມ່ວນ, ແຂວງສະຫວັນນະເຂດ | | | |
| | | ອາຄານສຳນັກງານ/ມ$^2$ | ຫໍພັກ/ມ$^2$ | ທາງເຂົ້າ, ກຳແພງ, ຝາກັ້ນດິນ ແລະ ຮົ້ວ/ມ$^2$ | ເດີ່ນ ແລະ ຖົມດິນ/ມ$^2$ |
| 1 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 2 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ (ກໍລະນີນຳໃຊ້ແບບເກົ່າຂອງ ຂໍ້ 1ໂດຍອອກແບບຈັດສັນ ຄືນໃສ່ດິນຕອນໃໝ່ ເຊິ່ງຈະມີການດັດແກ້ແບບໂດຍຕັດ ຫຼື ອອກແບບເພີ່ມ | | | | |

| | | | | | |
|---|---|---|---|---|---|
| | ເຊັ່ນ: ເຮືອນພັກ, ວຽກເດີ່ນ, ຄວາມສູງ-ຕ່ຳຂອງອາຄານທຽບໃສ່ຕອນດິນ ແລະ ໜ້າທາງ, ວຽກກຳແພງ-ວຽກປະຕູຮົ້ວ-ວຽກລະບົບໄຟຟ້າຮົ້ວ, ຮ່ອງລະບາຍນ້ຳ, ຮາກຖານ ແລະ ວຽກອື່ນທີ່ໄດ້ອອກແບບໃໝ່ ເພື່ອໃຫ້ມີຄວາມເໝາະສົມ) | | | | |
| 3 | ລາຄາອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 4 | ລາຄາສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ ແລະ ລາຄາກາງ | | | | |

| ລ/ດ | ຮູບແບບ | (ລາຄາຫົວໜ່ວຍ/ຕາແມັດ) | | | |
|---|---|---|---|---|---|
| | | ລາຄາເຂດ 06: ແຂວງຈຳປາສັກ, ແຂວງສາລະວັນ, ແຂວງເຊກອງ, ແຂວງອັດຕະປື | | | |
| | | ອາຄານສຳນັກງານ/ມ$^2$ | ຫໍພັກ/ມ$^2$ | ທາງເຂົ້າ, ກຳແພງ, ຝາກັ້ນດິນ ແລະ ຮົ້ວ/ມ$^2$ | ເດີ່ນ ແລະ ຖົມດິນ/ມ$^2$ |
| 1 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 2 | ລາຄາອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ (ກໍລະນີນຳໃຊ້ແບບເກົ່າຂອງ ຂໍ້ 1ໂດຍອອກແບບຈັດສັນ ຄືນໃສ່ດິນຕອນໃໝ່ ເຊິ່ງຈະມີການດັດແກ້ແບບໂດຍຕັດ ຫຼື ອອກແບບເພີ່ມ ເຊັ່ນ: ເຮືອນພັກ, ວຽກເດີ່ນ, ຄວາມສູງ-ຕ່ຳຂອງອາຄານທຽບໃສ່ຕອນດິນ ແລະ ໜ້າທາງ, ວຽກກຳແພງ-ວຽກປະຕູຮົ້ວ-ວຽກລະບົບໄຟຟ້າຮົ້ວ, ຮ່ອງລະບາຍນ້ຳ, ຮາກຖານ ແລະ ວຽກອື່ນທີ່ໄດ້ອອກແບບໃໝ່ ເພື່ອໃຫ້ມີຄວາມເໝາະສົມ) | | | | |
| 3 | ລາຄາອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ | | | | |
| 4 | ລາຄາສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ ແລະ ລາຄາກາງ | | | | |

2) ໜັງສືຄ້ຳປະກັນການປະມູນ: ຜູ້ຮັບເໝົາຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທີ່ສະເໜີ ດ້ວຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 12/07/2026) ຫຼື ແຊັກທີ່ວີຊາແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນປະມູນ ທຄຕລ ຈະສົ່ງໜັງສືຄ້ຳປະກັນ ຫຼື ແຊັກດັ່ງກ່າວຄືນ, ສຳລັບຜູ້ຊະນະການປະມູນແມ່ນຈະສົ່ງຄືນພາຍຫຼັງເຊັນສັນຍາ.

- ວັນອັງຄານ, ວັນທີ 12/05/2026, ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນຊ່ອງໜ້າຄະນະກຳມະການ ທຄຕລ, ບໍລິສັດຕ້ອງຍື່ນຊອງດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມເປີດຊອງປະມູນທີ່ຫ້ອງປະຊຸມຊັ້ນ 05 ຕຶກ C;
- ລາຄາທີ່ສະເໜີມາຕ້ອງເປັນລາຄາທີ່ສາມາດເປັນຜູ້ອອກແບບເອງ ແລະ ບໍ່ໃຫ້ເປັນການປະມູນໃນນາມ ນາຍໜ້າ ຫຼື ຂາຍຕໍ່ໃຫ້ບໍລິສັດອື່ນ;

## II. ເງື່ອນໄຂດ້ານການອອກແບບ

1) ໄລຍະເວລາການອອກແບບ: ທຄຕລ ຈະເຊັນສັນຍາກັບຜູ້ຊະນະປະມູນເທື່ອລະ 02ປີ ຕະຫຼອດ ໄລຍະເວລາຕາມສັນຍາລາຄາຈະບໍ່ມີການປ່ຽນແປງ;

2) ໜ້າວຽກທີ່ຕ້ອງອອກແບບ ແລະ ຄິດໄລ່ປະກອບມີ: ວຽກບຸກເບີກ, ຖົມດິນ, ຕີຜັງ, ຮາກຖານ, ເສົາ, ຄານ, ພື້ນ, ຝາ, ເພດານ, ຫຼັງຄາ, ວຽກສຸຂະພິບານ, ລະບົບໄຟຟ້າ, ລະບົບກັນຟ້າຜ່າ, ລະບົບປ້ອງກັນໄຟກະຊາກ, ລະບົບດັບເພີງ, ລະບົບແອເຢັນ, ລະບົບລະບາຍອາກາດ, ເຟີນິເຈີຕິດຕັ້ງ, ເຟີນິເຈີລອຍ, ວຽກເດີ່ນໃນຮົ້ວ ແລະ ນອກຮົ້ວ, ວຽກກຳແພງ, ວຽກປະຕູຮົ້ວ, ວຽກທາສີ, ວຽກກັນຂະໂມຍ, ວຽກປ້າຍ ແລະ ວຽກອື່ນໆທີ່ກ່ຽວຂ້ອງ. ຍົກເວັ້ນວຽກລະບົບໄອທີ ຄື: ວຽກລະບົບ network, Alarm, ກ້ອງວົງຈອນປິດ, Access control, ວຽກແລ່ນສາຍໂທລະສັບ.

3) ອອກແບບກໍ່ສ້າງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ: ສາຂາ, ໜ່ວຍບໍລິການ, ຫ້ອງແລກປ່ຽນ ແລະ ຫ້ອງບໍລິການຕ່າງໆ;

4) ອອກແບບສ້ອມແປງ ແລະ ຕົບແຕ່ງ + ຄິດໄລ່ BOQ ແລະ ລາຄາກາງ: ໜ່ວຍບໍລິການ, ຫ້ອງແລກປ່ຽນ ແລະ ຫ້ອງບໍລິການຕ່າງໆ;
5) ສຳຫຼວດສະຖານທີ່ໃນການສ້ອມແປງ + ຄິດໄລ່ BOQ: ສຳນັກງານໃຫຍ່, ສາຂາ, ໜ່ວຍບໍລິການ, ຫ້ອງແລກປ່ຽນ ແລະ ຫ້ອງບໍລິການຕ່າງໆ;
6) ການຄັດເລືອກບໍລິສັດທີ່ຊະນະການປະມູນໃນແຕ່ລະເຂດຈະຂຶ້ນກັບເງື່ອນໄຂດ້ານຄຸນວຸດທິ ແລະ ລາຄາໃນແຕ່ລະເຂດ;
7) ບໍລິສັດສາມາດຍື່ນລາຄາທຸກເຂດ ຫຼື ເຂດໃດໜຶ່ງກໍ່ໄດ້.

**III. ການພົວພັນ ແລະ ໄລຍະເວລາການປະຕິບັດວຽກ**

1) ສາມາດສອບຖາມລາຍລະອຽດເພີ່ມເຕີມກ່ຽວກັບລາຍລະອຽດການອອກແບບ ຈາກວັນທີ 06/04/2026-06/05/2026, ໃນຊ່ວງເວລາ 08:30-11:30 ໂມງ ແລະ 13:30-16:00 ໂມງ ທີ່ໝາຍເລກໂທລະສັບ 021 213200-414 ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

**IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ໃຫ້ບໍລິການທີ່ຊະນະການປະມູນ:**

1) ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ທຄຕລ ຈະບໍ່ສົ່ງເງິນຄ້ຳປະກັນການປະມູນ 10% ຄືນ.
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ, ຄ່າທຳນຽມຈົດທະບຽນສານ ແລະ ຈົດທະບຽນຊັບສິນຂອງສັນຍາແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດອອກແບບທີ່ຊະນະການປະມູນ.
3) ການຊຳລະຄ່າອອກແບບ 100% ພາຍຫຼັງ ທຄຕລ ໄດ້ຮັບແບບແຕ້ມ ແລະ BOQ ສະບັບຄົບຖ້ວນສົມບູນໃນແຕ່ລະໂຄງການ. ສຳລັບຄ່າອອກແບບແມ່ນຄິດໄລ່ຕາມເນື້ອທີ່ໂຕຈິງຂອງວຽກແຕ່ລະຄັ້ງທີ່ໄດ້ອອກແບບໂດຍການເຫັນດີຈາກຄະນະກຳມະການຂອງ ທຄຕລ;
4) ໃນການປະຕິບັດສັນຍາໃນໄລຍະ 02ປີ ເຊິ່ງ ທຄຕລ ອາດຈະມີໂຄງການທີ່ມີລັກສະນະສະເພາະ ຫຼື ມີວັດຖຸປະສົງອັນສະເພາະຂອງ ທຄຕລ ເອງ ແມ່ນ ທຄຕລ ສາມາດມີການແຈ້ງເຊີນປະມູນບໍລິສັດອອກແບບຕ່າງຫາກ ເພື່ອໃຫ້ໄດ້ຕາມວັດຖຸປະສົງຂອງ ທຄຕລ;
5) ການປະຕິບັດສັນຍາໃນໄລຍະ 02ປີ ທຄຕລ ຈະມີການປະເມີນການປະຕິບັດວຽກຂອງຜູ້ໃຫ້ບໍລິການ ກໍລະນີການປະຕິບັດວຽກບໍ່ມີປະສິດທິພາບ ທຄຕລ ສາມາດພິຈາລະນາຍົກເລີກສັນຍາບໍລິການໄດ້.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດເພື່ອຍື່ນຊອງປະມູນຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ຜູ້ປະສານງານ:

1) ທ່ານ ນາງ ວຽງແກ້ວ ອິນສີມີໄຊ 020 59 594 236
2) ທ່ານ ເພັດສະໝອນ ແສງຕະກຸນ 020 77467722